ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 27 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 29 MAR 2022

# ຂໍ້ຕົກລົງ
# ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ
# ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 22/ສຄຄຊ, ລົງວັນທີ 11 ມີນາ 2022.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ເພື່ອເຮັດໃຫ້ການລາຍງານ ແລະ ການເປີດເຜີຍຂໍ້ມູນມີຄວາມ ເປັນເອກະພາບ, ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ແນໃສ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ໃນການເຄື່ອນໄຫວວຽກງານຫຼັກຊັບ.

**ມາດຕາ 2 ການລາຍງານ ແລະ ການເປີດເຜີຍຂໍ້ມູນ**

ການລາຍງານ ແມ່ນການນຳສົ່ງຂໍ້ມູນຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໃຫ້ອົງການຄຸ້ມຄອງວຽກງານຫຼັກຊັບ ເພື່ອຮັບຊາບ ແລະ ຕິດຕາມກວດກາ.

ການເປີດເຜີຍຂໍ້ມູນ ແມ່ນການນຳເອົາຂໍ້ມູນຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ເຜີຍແຜ່ຕໍ່ມວນຊົນຮັບຊາບ.

ເນື້ອໃນຂອງ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ປະກອບດ້ວຍ ການເຄື່ອນໄຫວທຸລະກິດ, ເອກະສານລາຍງານການເງິນ ແລະ ຂໍ້ມູນສຳຄັນຕ່າງໆຂອງບໍລິສັດ ຕາມໄລຍະເວລາ ແລະ ຊ່ອງທາງ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ເອກະສານລາຍງານການເງິນ ປະກອບດ້ວຍ:

1. ໃບລາຍງານຖານະການເງິນ;
2. ໃບລາຍງານຜົນການດຳເນີນງານ;
3. ໃບລາຍງານກະແສເງິນສົດ;
4. ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ;
5. ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ.

**ມາດຕາ 3 (ປັບປຸງ) ຫຼັກການ ການລາຍງານ ແລະ ການເປີດເຜີຍຂໍ້ມູນ**

ການລາຍງານ ແລະ ການເປີດເຜີຍຂໍ້ມູນ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
2. ເປັນເອກະພາບ, ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
3. ຮັບປະກັນຄວາມສະເໝີພາບຂອງມວນຊົນ ໃນການເຂົ້າເຖິງຂໍ້ມູນທີ່ເປີດເຜີຍ;
4. ການລາຍງານ ແລະ ການເປີດເຜີຍຂໍ້ມູນ ຕ້ອງເປັນພາສາລາວ ແລະ ພາສາອັງກິດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ.

## ໝວດທີ 2
## ພັນທະ ແລະ ການແຕ່ງຕັ້ງຜູ້ຮັບຜິດຊອບ
## ການລາຍງານ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

**ມາດຕາ 5 ພັນທະໃນການລາຍງານ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ມີພັນທະລາຍງານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ລະບຽບການສະເພາະ ຕາມການກຳນົດຂອງຕະຫຼາດຫຼັກຊັບ ພ້ອມທັງ ຕ້ອງຮັບຜິດຊອບຕໍ່ເນື້ອໃນຂອງການລາຍງານດັ່ງກ່າວ.

**ມາດຕາ 6 ການແຕ່ງຕັ້ງຜູ້ຮັບຜິດຊອບໃນ ການລາຍງານ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງແຕ່ງຕັ້ງຜູ້ຮັບຜິດຊອບໃນການລາຍງານສຳລັບບໍລິສັດຕົນ ຢ່າງໜ້ອຍ 2 ຄົນ ຊຶ່ງໜຶ່ງໃນຜູ້ຮັບຜິດຊອບ ການລາຍງານ ທີ່ຖືກແຕ່ງຕັ້ງຕ້ອງແມ່ນຮອງຜູ້ອຳນວຍການໃຫຍ່ຜູ້ຊີ້ນຳວຽກງານການເງິນ.

ພາຍຫຼັງ ແຕ່ງຕັ້ງຜູ້ຮັບຜິດຊອບການລາຍງານ ສຳເລັດ ຕ້ອງແຈ້ງລາຍຊື່ໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນແຕ່ງຕັ້ງສຳເລັດ ເປັນຕົ້ນໄປ. ກໍລະນີ ຜູ້ຮັບຜິດຊອບການລາຍງານ ທີ່ຖືກແຕ່ງຕັ້ງນັ້ນ ບໍ່ສາມາດປະຕິບັດໜ້າທີ່ດັ່ງກ່າວ ຍ້ອນເຫດຜົນໃດໜຶ່ງ ໃຫ້ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ແຕ່ງຕັ້ງຜູ້ອື່ນປ່ຽນແທນ ພ້ອມທັງແຈ້ງລາຍຊື່ໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງ ເປັນລາຍລັກອັກສອນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນແຕ່ງຕັ້ງປ່ຽນແທນສຳເລັດ ເປັນຕົ້ນໄປ.

ການລາຍງານ ແຕ່ລະຄັ້ງ ຕ້ອງໄດ້ຮັບການເຊັນຢັ້ງຢືນຈາກ ຜູ້ຮັບຜິດຊອບການລາຍງານ.

## ໝວດທີ 3
## ຮູບແບບ ແລະ ຊ່ອງທາງການລາຍງານ

### ມາດຕາ 7 ຮູບແບບການລາຍງານ

ການລາຍງານ ປະກອບມີ 4 ຮູບແບບ ຄື: ປົກກະຕິ, ກະທັນຫັນ, ຕາມການຮຽກຮ້ອງ ແລະ ດ້ວຍຄວາມສະໝັກໃຈ.

### ມາດຕາ 8 ຮູບແບບການລາຍງານປົກກະຕິ

ການລາຍງານ ແບບປົກກະຕິ ແມ່ນ ການລາຍງານ ຕາມງວດເວລາ ຊຶ່ງປະກອບມີ: ປະຈຳໄຕມາດ, ປະຈຳ 6 ເດືອນຕົ້ນປີ ແລະ ປະຈຳປີ.

**1. ການລາຍງານປະຈຳໄຕມາດ**

ການລາຍງານ ປະຈຳໄຕມາດ ປະກອບມີ: ໄຕມາດ 1 ແລະ ໄຕມາດ 3.

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ປະຈຳໄຕມາດ 1 ແລະ ໄຕມາດ 3 ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 45 ວັນ ນັບແຕ່ວັນສິ້ນສຸດ ໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ.

ຂໍ້ມູນທີ່ຕ້ອງລາຍງານປະຈຳໄຕມາດ ແມ່ນ ເອກະສານລາຍງານການເງິນທີ່ຜ່ານການເຊັນຢັ້ງຢືນ ຈາກ ຝ່າຍບັນຊີ, ຝ່າຍກວດສອບພາຍໃນ ແລະ ຜູ້ອຳນວຍການຂອງບໍລິສັດດັ່ງກ່າວ.

ກໍລະນີ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ເປັນກຸ່ມບໍລິສັດ ເອກະສານລາຍງານການເງິນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນ ທັງແບບ ແຍກກິດຈະການ ແລະ ລວມກິດຈະການ.

**2. ການລາຍງານປະຈຳ 6 ເດືອນຕົ້ນປີ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ປະຈຳ 6 ເດືອນຕົ້ນປີ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 60 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ.

ຂໍ້ມູນທີ່ຕ້ອງລາຍງານປະຈຳ 6 ເດືອນຕົ້ນປີ ແມ່ນ ເອກະສານລາຍງານການເງິນ ທີ່ຕ້ອງໄດ້ຮັບການທົບທວນຄືນ ຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານຂອງບໍລິສັດດັ່ງກ່າວ.

ກໍລະນີ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ເປັນກຸ່ມບໍລິສັດ ເອກະສານລາຍງານການເງິນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນ ທັງແບບແຍກກິດຈະການ ແລະ ລວມກິດຈະການ.

**3. ການລາຍງານປະຈຳປີ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ປະຈຳປີ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 120 ວັນ ພາຍຫຼັງສິ້ນສຸດປີການບັນຊີ ເປັນຕົ້ນໄປ.

ຂໍ້ມູນທີ່ຕ້ອງລາຍງານປະຈຳປີ ປະກອບມີ ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ (Annual Report) ຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ແລະ ເອກະສານລາຍງານການເງິນ ຊຶ່ງເອກະສານລາຍງານການເງິນ ຕ້ອງໄດ້ຮັບການກວດສອບຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດດັ່ງກ່າວ.

ກໍລະນີ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ເປັນກຸ່ມບໍລິສັດ ເອກະສານລາຍງານການເງິນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນ ທັງແບບ ແຍກກິດຈະການ ແລະ ລວມກິດຈະການ.

ເອກະສານລາຍງານການເງິນປະຈຳປີ ຕ້ອງສະແດງລາຍລະອຽດກ່ຽວກັບ ລາຍການທີ່ກ່ຽວພັນ ເປັນຕົ້ນ ພັນທະຕາມສັນຍາ, ຊັບສິນ ຫຼື ການບໍລິການ ທີ່ຈະມີການຊື້ ຫຼື ຂາຍ, ການກູ້ຢືມ, ຄຸນລັກສະນະ,ມູນຄ່າຂອງທຸລະກຳ, ຜົນປະໂຫຍດທີ່ໄດ້ຮັບຈາກທຸລະກຳ ແລະ ລາຍລະອຽດກ່ຽວກັບຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດທັງໝົດ.

ເອກະສານລາຍງານການເງິນ ປະຈຳໄຕມາດ, ປະຈຳ 6 ເດືອນ ແລະ ປະຈຳປີ ແມ່ນໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ ທີ່ຄັດຕິດມານຳຂໍ້ຕົກລົງສະບັບນີ້.

**ມາດຕາ 9 ຮູບແບບການລາຍງານກະທັນຫັນ**

ການລາຍງານ ແບບກະທັນຫັນ ແມ່ນ ການລາຍງານ ຕາມເຫດການໃດໜຶ່ງທີ່ເກີດຂຶ້ນ.

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 24 ຊົ່ວໂມງ ໃນວັນລັດຖະການ ກໍລະນີ ມີເຫດການໃດໜຶ່ງເກີດຂຶ້ນດັ່ງນີ້:

1. ມະຕິກອງປະຊຸມຂອງສະພາບໍລິຫານ ເປັນຕົ້ນ ການຮັບຮອງເອົາມື້ເປີດກອງປະຊຸມຜູ້ຖືຮຸ້ນ ແລະ ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ;
2. ການໄດ້ມາ ແລະ ການຊື້ຂາດຊັບສິນ ທີ່ມີມູນຄ່າຫຼາຍກວ່າ ຫ້າສ່ວນຮ້ອຍ (5%) ຂອງຊັບສິນທັງໝົດຂອງບໍລິສັດ ແລະ ການຊ່ວຍເຫຼືອທາງການເງິນໃຫ້ແກ່ ບຸກຄົນ ຫຼື ນິຕິບຸກຄົນອື່ນ;
3. ການຮ່ວມ ຫຼື ຍົກເລີກ ການຮ່ວມລົງທຶນ, ການຄວບ, ຍຸບເລີກ, ຂາຍ ຫຼື ໂອນກິດຈະການໃດໜຶ່ງ ຫຼື ທັງໝົດ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ;
4. ການອອກຈຳໜ່າຍຫຼັກຊັບເພີ່ມ ຫຼື ການຊື້ຫຼັກຊັບຄືນ;
5. ມະຕິກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນ ການຮັບຮອງເອົາແຜນການດຳເນີນທຸລະກິດປະຈຳປີ, ແຜນການຂະຫຍາຍທຸລະກິດໄລຍະກາງ-ຍາວ ແລະ ຍຸດທະສາດ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ການປ່ຽນແປງຫຼັກການ, ນະໂຍບາຍການບັນຊີ ແລະ ມາດຕະຖານດ້ານການລາຍງານການເງິນທີ່ນຳໃຊ້ ແລະ ການກູ້ຢືມເງິນ ໃນຈຳນວນທີ່ມີຜົນຕໍ່ຖານະການເງິນ ແລະ ຜົນການດຳເນີນທຸລະກິດ;
6. ການປ່ຽນແປງທີ່ສຳຄັນ ໃນລາຍຈ່າຍເພື່ອການລົງທຶນ;
7. ການສະເໜີຊື້ຫຼັກຊັບ ຂອງບໍລິສັດອື່ນ;
8. ການຈ່າຍ ຫຼື ບໍ່ຈ່າຍ ເງິນ ຫຼື ຮຸ້ນ ປັນຜົນ;
9. ການປ່ຽນແປງ ສະມາຊິກຂອງສະພາບໍລິຫານ, ຄະນະກຳມະການຂອງສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າກວດສອບພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ;

10. ການປ່ຽນແປງການເຄື່ອນໄຫວ ແລະ ການດຳລົງຕຳແໜ່ງຂອງສະມາຊິກສະພາບໍລິຫານ ໃນບໍລິສັດອື່ນ;

11. ບໍ່ສາມາດຊຳລະໜີ້ ຕາມວັນ ແລະ ເວລາ ທີ່ກຳນົດໄວ້ໃນສັນຍາ;

12. ບັນຊີເງິນຝາກຢູ່ທະນາຄານຖືກງົດການເຄື່ອນໄຫວຊົ່ວຄາວ ຫຼື ພາຍຫຼັງບັນຊີເງິນຝາກໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວຄືນ;

13. ໂຈະ ຫຼື ຢຸດເຊົາ ການດຳເນີນທຸລະກິດ ບາງສ່ວນ ຫຼື ທັງໝົດ;

14. ປ່ຽນແປງ ຫຼື ຖືກຖອນ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ;

15. ປະທານ, ຮອງປະທານ ແລະ ສະມາຊິກສະພາບໍລິຫານ, ຄະນະກຳມະການຂອງສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າກວດສອບພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ຖືກລົງວິໄນ ຫຼື ຖືກດຳເນີນຄະດີ ເນື່ອງຈາກມີການລະເມີດລະບຽບກົດໝາຍ;

16. ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຢູ່ໃນສະພາວະລົ້ມລະລາຍ ຫຼື ສານປະຊາຊົນມີຄຳຕັດສິນໃຫ້ ເປັນວິສາຫະກິດລົ້ມລະລາຍ;

17. ໄດ້ຮັບຄວາມເສຍຫາຍຢ່າງຮ້າຍແຮງຈາກເຫດສຸດວິໄສ, ສະພາບເສດຖະກິດ-ສັງຄົມ ແລະ ອື່ນໆ;

18. ປ່ຽນແປງວັດຖຸປະສົງ ຫຼື ລັກສະນະການດຳເນີນທຸລະກິດ ບາງສ່ວນ ຫຼື ທັງໝົດ;

19. ເຮັດສັນຍາໃຫ້ບຸກຄົນອື່ນເຂົ້າມາບໍລິຫານພາຍໃນ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ບາງສ່ວນ ຫຼື ທັງໝົດ;

20. ເຫດການໃດໜຶ່ງ ທີ່ເກີດຂຶ້ນ ຫຼື ອາດເກີດຂຶ້ນ ທີ່ສົ່ງຜົນກະທົບຕໍ່ສິດ, ຜົນປະໂຫຍດຂອງຜູ້ຖືຮຸ້ນ ຫຼື ຕໍ່ການຕັດສິນໃຈໃນການລົງທຶນຂອງຜູ້ລົງທຶນ ຫຼື ການປ່ຽນແປງຂອງລາຄາຫຼັກຊັບຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ;

21. ເຫດການອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ນອກຈາກນີ້ ຕ້ອງລາຍງານ ພາຍໃນເວລາ 72 ຊົ່ວໂມງ ໃນວັນລັດຖະການ ກໍລະນີ ມີເຫດການໃດໜຶ່ງເກີດຂຶ້ນ ເປັນຕົ້ນ:

1. ມະຕິຕົກລົງກ່ຽວກັບ ການສ້າງຕັ້ງ ຫຼື ຍຸບເລີກສາຂາ;
2. ຍົກຍ້າຍສຳນັກງານໃຫຍ່;
3. ປ່ຽນແປງຜູ້ກວດສອບ ລວມທັງ ຜູ້ກວດສອບຂອງບໍລິສັດໃນກຸ່ມຂອງຕົນ;
4. ການຊື້ ຂາຍຫຼັກຊັບຂອງ ປະທານ, ຮອງປະທານ ແລະ ສະມາຊິກສະພາບໍລິຫານ, ຄະນະກຳມະການຂອງສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າກວດສອບພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ;
5. ລາຍລະອຽດກ່ຽວກັບ ລາຍການທີ່ກ່ຽວພັນ ເປັນຕົ້ນ ພັນທະຕາມສັນຍາ, ຊັບສິນ ຫຼື ການບໍລິການ ທີ່ຈະມີການຊື້ ຫຼື ຂາຍ, ການກູ້ຢືມ, ຄຸນລັກສະນະ, ມູນຄ່າຂອງທຸລະກຳ, ຜົນປະໂຫຍດທີ່ໄດ້ຮັບຈາກທຸລະກຳ ແລະ ລາຍລະອຽດກ່ຽວກັບຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດທັງໝົດ.

**ມາດຕາ 10 ຮູບແບບການລາຍງານຕາມການຮຽກຮ້ອງ**

ການລາຍງານ ຕາມການຮຽກຮ້ອງ ແມ່ນການລາຍງານຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນກໍລະນີມີເຫດການໃດໜຶ່ງເກີດຂຶ້ນ ທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຫັນວ່າ ທີ່ສົ່ງ ຫຼື ອາດສົ່ງ ຜົນກະທົບຕໍ່ ສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຕໍ່ລາຄາຫຼັກຊັບ ຫຼື ຕໍ່ສະຖຽນລະພາບຂອງຕະຫຼາດທຶນ.

**ມາດຕາ 11 ຮູບແບບການລາຍງານດ້ວຍຄວາມສະໝັກໃຈ**

ການລາຍງານ ດ້ວຍຄວາມສະໝັກໃຈ ແມ່ນ ການລາຍງານ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງການໃຫ້ຜູ້ຄຸ້ມຄອງ ແລະ ຜູ້ລົງທຶນ ຮັບຮູ້ກ່ຽວກັບຂໍ້ມູນດັ່ງກ່າວເພີ່ມເຕີມ.

**ມາດຕາ 12 ຊ່ອງທາງການລາຍງານ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ໃນ 2 ຊ່ອງທາງຄື: ລາຍງານເປັນລາຍລັກອັກສອນ ແລະ ເປັນເອເລັກໂຕຣນິກ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 13 ການເກັບຮັກສາຂໍ້ມູນ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງ ກັບ ການລາຍງານ ຢ່າງໜ້ອຍ 10 ປີ ນັບແຕ່ວັນທີ່ໄດ້ລາຍງານໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

**ມາດຕາ 14 ການລາຍງານບົດບັນທຶກກອງປະຊຸມຜູ້ຖືຮຸ້ນ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ພາຍໃນເວລາ 14 ວັນ ນັບຕັ້ງແຕ່ວັນເປີດກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນໄປ.

**ມາດຕາ 15 (ປັບປຸງ) ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ**

ເນື້ອໃນລະອຽດກ່ຽວກັບ ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ (Annual Report) ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ໃຫ້ປະຕິບັດຕາມແຈ້ງການຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ວາງອອກໃນແຕ່ລະໄລຍະ.

## ໝວດທີ 4
## ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

**ມາດຕາ 16 ພັນທະໃນການເປີດເຜີຍຂໍ້ມູນ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ມີພັນທະເປີດເຜີຍຂໍ້ມູນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ລະບຽບການສະເພາະ ຕາມການກຳນົດຂອງຕະຫຼາດຫຼັກຊັບ ພ້ອມທັງ ຕ້ອງຮັບຜິດຊອບຕໍ່ເນື້ອໃນທີ່ເປີດເຜີຍ.

**ມາດຕາ 17 ຂໍ້ມູນທີ່ຕ້ອງເປີດເຜີຍ**

1. ເປີດເຜີຍຂໍ້ມູນປົກກະຕິ ປະກອບມີ:

1.1. ເປີດເຜີຍຂໍ້ມູນປະຈຳໄຕມາດ 1 ແລະ ໄຕມາດ 3 ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂໍ້ 1 ຂອງຂໍ້ຕົກລົງສະບັບນີ້.

1.2. ເປີດເຜີຍຂໍ້ມູນປະຈຳ 6 ເດືອນຕົ້ນປີ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້.

1.3. ເປີດເຜີຍຂໍ້ມູນປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂໍ້ 3 ຂອງຂໍ້ຕົກລົງສະບັບນີ້.

2. ເປີດເຜີຍຂໍ້ມູນກະທັນຫັນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

3. ເປີດເຜີຍຂໍ້ມູນຕາມການຮຽກຮ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;

4. ເປີດເຜີຍຂໍ້ມູນດ້ວຍຄວາມສະໝັກໃຈ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;

5. ຂໍ້ມູນກ່ຽວກັບການກະກຽມກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນ: ໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ.

**ມາດຕາ 18 (ປັບປຸງ) ການຕິດຕາມການເປີດເຜີຍຂໍ້ມູນ**

ຕະຫຼາດຫຼັກຊັບ ເປັນຜູ້ຕິດຕາມການເປີດເຜີຍຂໍ້ມູນຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ. ກໍລະນີ ຕະຫຼາດຫຼັກຊັບ ພົບເຫັນຂໍ້ມູນທີ່ເປີດເຜີຍນັ້ນບໍ່ ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ຕ້ອງແຈ້ງໃຫ້ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ປັບປຸງແກ້ໄຂ ພ້ອມທັງລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບຊາບ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ 3 ວັນ ລັດຖະການ.

**ມາດຕາ 19 ຊ່ອງທາງ ການເປີດເຜີຍຂໍ້ມູນ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງເປີດເຜີຍຂໍ້ມູນຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງ ຕະຫຼາດຫຼັກຊັບ. ນອກຈາກນີ້ ຍັງສາມາດເປີດເຜີຍຂໍ້ມູນຜ່ານເວັບໄຊຂອງ ບໍລິສັດຕົນ ແລະ ຜ່ານພາຫະນະສື່ມວນຊົນອື່ນ ຕາມຄວາມເໝາະສົມ ແຕ່ການເປີດເຜີຍຂໍ້ມູນດັ່ງກ່າວ ຕ້ອງເປີດເຜີຍພາຍຫຼັງໄດ້ເປີດເຜີຍຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງ ຕະຫຼາດຫຼັກຊັບ.

ຂໍ້ມູນທີ່ຕ້ອງເປີດເຜີຍຂໍ້ມູນຜ່ານເວັບໄຊຂອງບໍລິສັດຕົນ ເປັນຕົ້ນ: ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີ (Annual Report), ເອກະສານລາຍງານການເງິນ, ໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ, ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ, ຊື່, ນາມສະກຸນ, ເບີໂທລະສັບ, ອີເມວ ແລະ ຂໍ້ມູນອື່ນໆຂອງ ຜູ້ຕິດຕໍ່ພົວພັນກັບຜູ້ລົງທຶນ ພ້ອມທັງ ວິໄສທັດ, ເປົ້າໝາຍ ແລະ ພາລະກິດຂອງບໍລິສັດ.

**ມາດຕາ 20 ການນຳໃຊ້ບົດບັນຍັດຂອງການລາຍງານ**

ນອກຈາກບົດບັນຍັດຕ່າງໆ ທີ່ໄດ້ກຳນົດໄວ້ໃນໝວດນີ້ ການເປີດເຜີຍຂໍ້ມູນກ່ຽວກັບ ການແຕ່ງຕັ້ງຜູ້ຮັບຜິດຊອບ, ການເກັບຮັກສາຂໍ້ມູນ, ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ແລະ ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ (Annual Report) ໃຫ້ປະຕິບັດຕາມບົດບັນຍັດ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 2 ການລາຍງານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ.

## ໝວດທີ 5
## ການຊີ້ແຈງກ່ຽວກັບຂ່າວລື ຫຼື ຂ່າວສານຕ່າງໆ ແລະ ຂໍ້ຫ້າມ

### ມາດຕາ 21 ການຊີ້ແຈງກ່ຽວກັບ ຂ່າວລື ຫຼື ຂ່າວສານຕ່າງໆ

ຕະຫຼາດຫຼັກຊັບ ຕ້ອງເປັນເຈົ້າການຕິດຕາມກວດກາ ຂ່າວລື ຫຼື ຂ່າວສານຕ່າງໆ ແລ້ວແຈ້ງໃຫ້ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຜ່ານທາງໂທລະສັບ, ອີເມວ, ແຟັກ ຫຼື ໜັງສືທາງການ ພ້ອມນັ້ນ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງຊີ້ແຈງຕໍ່ມວນຊົນ ຫຼື ລາຍງານຕໍ່ຜູ້ຄຸ້ມຄອງ ຜ່ານຊ່ອງທາງ ການລາຍງານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ແລະ ຊ່ອງທາງການເປີດເຜີຍຂໍ້ມູນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ກ່ອນເປີດການຊື້ ຂາຍຫຼັກຊັບ ຮອບຖັດໄປ.

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງຊີ້ແຈງ ແລະ ຢັ້ງຢືນກ່ຽວກັບ ຂ່າວລື ຫຼື ຂ່າວສານຕ່າງໆ ທີ່ຜູ້ລົງທຶນໄດ້ຮັບຜ່ານຊ່ອງທາງໃດໜຶ່ງ ເຊັ່ນ: ບົດຄວາມທີ່ເຜີຍແຜ່ຜ່ານພາຫະນະສື່ມວນຊົນຕ່າງໆ, ລາຍງານການເຄື່ອນໄຫວທຸລະກິດ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ແລະ ຂໍ້ມູນທີ່ເປັນຂ່າວລື ຫຼື ຂ່າວສານຕ່າງໆ ເຖິງວ່າ ຂໍ້ມູນດັ່ງກ່າວ ມີຄວາມຈິງ ຫຼື ບໍ່ມີຄວາມຈິງ, ມີຜົນ ຫຼື ບໍ່ມີຜົນກະທົບຕໍ່ ສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນ, ຕໍ່ລາຄາຫຼັກຊັບ ຫຼື ຕໍ່ການຕັດສິນໃຈຂອງຜູ້ລົງທຶນ.

### ມາດຕາ 22 ຂໍ້ຫ້າມ

ຫ້າມ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບິດເບືອນຄວາມຈິງ ເຮັດໃຫ້ຜູ້ໄດ້ຮັບຂໍ້ມູນເຂົ້າໃຈຜິດ;
2. ເປີດເຜີຍສະເພາະບາງກຸ່ມຄົນ;
3. ເປີດເຜີຍຂໍ້ມູນ ທີ່ເປັນຄວາມລັບ ຫຼື ຂໍ້ມູນ ທີ່ບໍ່ອະນຸຍາດໃຫ້ເປີດເຜີຍ;
4. ເປີດເຜີຍຂໍ້ມູນ ຜ່ານຊ່ອງທາງອື່ນກ່ອນການເປີດເຜີຍຂໍ້ມູນຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງ ຕະຫຼາດຫຼັກຊັບ;
5. ຂໍ້ຫ້າມອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 23 ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 24 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ ທີ່

ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກໍາ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທໍາອິດ ທີ່ມີລັກສະນະເບົາ ເປັນຕົ້ນ ບໍ່ໃຫ້ການຮ່ວມມືກັບ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນກ່ຽວຂ້ອງ ແລະ ກໍລະນີອື່ນທີ່ການລະເມີດສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ບໍ່ລາຍງານຕາມການກໍານົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;

3. ບໍ່ເປີດເຜີຍ ໜັງສືສະເໜີຊື້ຮຸ້ນ, ຄໍາເຫັນຂອງສະພາບໍລິຫານ ແລະ ທີ່ປຶກສາທາງດ້ານການເງິນອິດສະລະ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້;

4. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

5. ລະເມີດຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້;

6. ກໍລະນີອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກໍາ ຫຼື ການລະເມີດໃນລັກສະນະ ດັ່ງນີ້:

1. ບໍ່ເກັບຮັກສາຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງ ກັບ ການລາຍງານ ແລະ ເປີດເຜີຍຂໍ້ມູນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 8, 9, 10, 11 ແລະ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ 30.000.000 ກີບ;

2. ບໍ່ລາຍງານບົດລາຍງານການເຄື່ອນໄຫວທຸລະກິດປະຈໍາປີຂອງບໍລິສັດ (Annual Report) ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ 10.000.000 ກີບ;

3. ຕະຫຼາດຫຼັກຊັບ ບໍ່ຕິດຕາມ ຫຼື ຕິດຕາມບໍ່ລະອຽດຖີ່ຖ້ວນ ກ່ຽວກັບການເປີດເຜີຍຂໍ້ມູນຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຈະຖືກປັບໃໝ 20.000.000 ກີບ;

4. ຕະຫຼາດຫຼັກຊັບ ບໍ່ລາຍງານຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຊາບ ກ່ຽວກັບການລະເມີດການເປີດເຜີຍຂໍ້ມູນຂອງ ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຈະຖືກປັບໃໝ 10.000.000 ກີບ;

5. ເປີດເຜີຍຂໍ້ມູນ ຜ່ານຊ່ອງທາງອື່ນກ່ອນເປີດເຜີຍຂໍ້ມູນຜ່ານຊ່ອງທາງເປີດເຜີຍຂໍ້ມູນຂອງ ຕະຫຼາດຫຼັກຊັບ ຈະຖືກປັບໃໝ 25.000.000 ກີບ ຕໍ່ຄັ້ງ;

6. ບໍ່ເປີດເຜີຍ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ຈະຖືກປັບໃໝ 20.000.000 ກີບ;

7. ຕະຫຼາດຫຼັກຊັບ ບໍ່ຕິດຕາມກວດກາ ຂ່າວລື ຫຼື ຂ່າວສານຕ່າງໆ ຂອງບໍລິສັດອອກຈໍາໜ່າຍ ແລະ ບໍລິສັດຈົດທະບຽນ ຈະຖືກປັບໃໝ 20.000.000 ກີບ;

8. ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ບໍ່ຊີ້ແຈງ ແລະ ຢັ້ງຢືນກ່ຽວກັບ ຂ່າວລື ຫຼື ຂ່າວສານຕ່າງໆ ທີ່ຜູ້ລົງທຶນໄດ້ຮັບ ຈະຖືກປັບໃໝ 30.000.000 ກີບ;

9. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບໍ່ຖືກຕ້ອງ ຈະຖືກປັບໃໝ 30.000.000 ກີບ;

10. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບໍ່ຄົບຖ້ວນ ຈະຖືກປັບໃໝ 20.000.000 ກີບ;

11. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບໍ່ທັນເວລາ ຈະຖືກປັບໃໝ 1.000.000 ກີບ ຕໍ່ວັນ. ກໍລະນີເປີດເຜີຍຂໍ້ມູນລ່າຊ້າ ແຕ່ 1 ຫາ 5 ວັນ ຈະບໍ່ຖືກປັບໃໝ ແຕ່ ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດ

ທະບຽນ ຕ້ອງລາຍງານຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນກ່ຽວກັບສາເຫດຂອງການລ່າຊ້າດັ່ງກ່າວ. ຖ້າຫາກວ່າ ກາຍກໍານົດເວລາດັ່ງກ່າວ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຈະປະຕິບັດມາດຕະການປັບໃໝ ຕາມລະບຽບການ;

12. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບິດເບືອນຄວາມຈິງ ເຮັດໃຫ້ຜູ້ໄດ້ຮັບຂໍ້ມູນເຂົ້າໃຈຜິດ ຈະຖືກປັບໃໝ 20.000.000 ກີບ;

13. ເປີດເຜີຍສະເພາະບາງກຸ່ມຄົນ ຈະຖືກປັບໃໝ 20.000.000 ກີບ;

14. ເປີດເຜີຍຂໍ້ມູນ ທີ່ເປັນຄວາມລັບ ຫຼື ຂໍ້ມູນ ທີ່ບໍ່ທັນອະນຸຍາດໃຫ້ເປີດເຜີຍ ຈະຖືກປັບໃໝ 50.000.000 ກີບ.

ສໍາລັບ ຈໍານວນເງິນທີ່ໄດ້ຮັບຈາກການປັບໃໝດັ່ງກ່າວ ຖືວ່າເປັນລາຍຮັບຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕ້ອງນໍາໃຊ້ເຂົ້າໃນວຽກງານການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຕະ ຫຼາດຫຼັກຊັບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຕາມຂອບເຂດສິດ ແລະ ໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 26 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.

ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ

ຄະນະກໍາມະການຄຸ້ມຄອງຫຼັກຊັບ
ປະທານ

**ສອນໄຊ ສີພັນດອນ**

## ເອກະສານຊ້ອນທ້າຍ
## "ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (Annual Report)" (ສະບັບປັບປຸງ)

ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຢ່າງໜ້ອຍຕ້ອງປະກອບມີເນື້ອໃນຕົ້ນຕໍ່ ດັ່ງນີ້:

### I. ບົດລາຍງານປະຈຳປີ ຂອງ ບໍລິສັດ

1. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ:
   - ປະຫວັດ/ຍຸດທະສາດ, ວິໄສທັດ, ຈຸດປະສົງ, ເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານຂອງບໍລິສັດ ຫຼື ກຸ່ມບໍລິສັດ;
   - ຂໍ້ມູນທົ່ວໄປ: ຊື່, ທີ່ຢູ່ສຳນັກງານໃຫຍ່, ປະເພດທຸລະກິດ, ເລກທະບຽນວິສາຫະກິດ, ໂທລະສັບ, ແຟັກ, ເວັບໄຊ ແລະ ອື່ນໆ;
   - ຫ້ອງການ ແລະ ສາຂາ;
   - ພາບລວມທາງການເງິນ;
   - ຈຸດເດັ່ນຂອງຜົນການດຳເນີນງານ;
   - ຄຳເຫັນຂອງປະທານ (ຄຳເຫັນຂອງປະທານສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ);
   - ຄຳເຫັນຂອງຜູ້ບໍລິຫານ;
   - ການປ່ຽນແປງ ຫຼື ເຫດການ ທີ່ສຳຄັນ ທີ່ເກີດຂຶ້ນພາຍໃນປີ (ຖ້າມີ);
   - ການເຕີບໃຫຍ່/ຂະຫຍາຍຕົວ ຂອງທຸລະກິດ;
   - ບໍລິສັດໄປລົງທຶນແຕ່ອັດຕາສ່ວນ ຊາວຫ້າສ່ວນຮ້ອຍຂຶ້ນໄປ ຢູ່ໃນບໍລິສັດອື່ນ ຕ້ອງສະແດງໃຫ້ເຫັນ ຂໍ້ມູນໂຄງສ້າງ ແລະ ສັດສ່ວນການຖືຮຸ້ນຂອງຕົນໃນບໍລິສັດດັ່ງກ່າວ ພ້ອມທັງສະແດງໃຫ້ເຫັນສັດສ່ວນການຖືຄອງຮຸ້ນ ແລະ ບັນດາລາຍຊື່ຂອງຜູ້ຖືຄອງຮຸ້ນລາຍອື່ນ ຢູ່ໃນບໍລິສັດດັ່ງກ່າວ (ຖ້າມີ);
   - ບໍລິສັດເປັນກຸ່ມບໍລິສັດໄປລົງທຶນໃນບໍລິສັດໃນກຸ່ມຂອງຕົນ ຕ້ອງສະແດງໃຫ້ເຫັນ ຂໍ້ມູນທາງດ້ານໂຄງສ້າງ ແລະ ສັດສ່ວນ ກ່ຽວກັບການຖືຄອງຮຸ້ນຂອງຕົນໃນບໍລິສັດດັ່ງກ່າວ ພ້ອມທັງສະແດງໃຫ້ເຫັນສັດສ່ວນການຖືຄອງຮຸ້ນ ແລະ ບັນດາລາຍຊື່ຂອງຜູ້ຖືຄອງຮຸ້ນລາຍອື່ນ ຢູ່ໃນບໍລິສັດ ດັ່ງກ່າວ (ຖ້າມີ);
   - ຄຳໝັ້ນສັນຍາຂອງບໍລິສັດ;
   - ສະພາບໍລິຫານ ແລະ ຄະນະບໍລິຫານງານ.
2. ບົດອະທິບາຍ ແລະ ການວິເຄາະງົບການເງິນ
   - ສະພາບຂອງ ເສດຖະກິດສາກົນ, ເສດຖະກິດພາຍໃນປະເທດ ແລະ ບໍລິສັດ ໂດຍຍົກໃຫ້ເຫັນໂອກາດ, ສິ່ງທ້າທາຍ ແລະ ທ່າແຮງບົ່ມຊ້ອນ;
   - ສະຫຼຸບໂດຍຫຍໍ້ກ່ຽວກັບຂໍ້ມູນທາງການເງິນທີ່ສຳຄັນຂອງບໍລິສັດ;

- ສະຫຼຸບຜົນການດຳເນີນງານ ພາຍໃນປີ ຂອງ ບໍລິສັດ (ສົມທຽບກັບປີຜ່ານມາ);
- ອັດຕາສ່ວນທາງການເງິນຂອງບໍລິສັດ ໂດຍສົມທຽບໃສ່ປີຜ່ານມາ;
- ເສັ້ນສະແດງແນວໂນ້ມຜົນການດຳເນີນງານ ແລະ ຖານະການເງິນ ຂອງບໍລິສັດ ໃນຊ່ວງ 5 ປີຍ້ອນຫຼັງ ສະເພາະລາຍຮັບ, ລາຍຈ່າຍ, ກຳໄລ, ຊັບສິນ ແລະ ໜີ້ສິນ;
- ຂໍ້ມູນເພີ່ມເຕີມ.

3. ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ:
   - ຂໍ້ມູນກ່ຽວກັບຫຼັກຊັບ: ທຶນຈົດທະບຽນທັງໝົດ ແລະ ທຶນຈົດທະບຽນທີ່ຊຳລະແລ້ວ, ຈຳນວນຮຸ້ນທັງໝົດ ແລະ ສັດສ່ວນຮຸ້ນທີ່ອອກຈຳໜ່າຍໃຫ້ແກ່ມ່ວນຊົນ, ມູນຄ່າ, ສິດ ແລະ ເງື່ອນໄຂຂອງຮຸ້ນສາມັນ ແລະ ຮຸ້ນປະເພດອື່ນ (ຖ້າມີ);
   - ຂໍ້ມູນກ່ຽວກັບຜູ້ຖືຮຸ້ນ: ລາຍຊື່ຜູ້ຖືຮຸ້ນ ບໍ່ວ່າ ທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປ ພ້ອມທັງຈຳນວນຮຸ້ນທີ່ຖື ແລະ ສັດສ່ວນການຖືຄອງຮຸ້ນ ລ້າສຸດ ຂອງຜູ້ກ່ຽວ. ກໍລະນີ ຜູ້ຖືຮຸ້ນດັ່ງກ່າວ ເປັນນິຕິບຸກຄົນ ຕ້ອງສະແດງໃຫ້ເຫັນ ລາຍຊື່ ຜູ້ຖືຮຸ້ນຫຼັກ ແລະ ທຸລະກິດຫຼັກ ຂອງນິຕິບຸກຄົນດັ່ງກ່າວ ແລະ ສັດສ່ວນຂອງຜູ້ຖືຄອງຮຸ້ນເປັນສ່ວນຮ້ອຍ (%);
   - ຂໍ້ມູນຜູ້ຖືຮຸ້ນ ແລະ ອື່ນໆ.

4. ສະພາບໍລິຫານ ແລະ ຄະນະອຳນວຍການ:
   - ສະພາບໍລິຫານ:
     - ❖ ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ແລະ ປະຫວັດໂດຍຫຍໍ້ຂອງ ສະມາຊິກສະພາບໍລິຫານ ພ້ອມທັງລະບຸໃຫ້ຈະແຈ້ງວ່າຜູ້ໃດເປັນ ກຳມະການອິດສະຫຼະ ແລະ/ຫຼື ເປັນກຳມະການຢູ່ໃນຄະນະກຳມະການອື່ນໆ ຂອງບໍລິສັດ;
     - ❖ ຈຳນວນຄັ້ງຂອງກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານ ແລະ ການເຂົ້າຮ່ວມກອງປະຊຸມດັ່ງກ່າວ ຂອງສະມາຊິກສະພາບໍລິຫານ ໃນປີຜ່ານມາ.
   - ຄະນະອຳນວຍການ: ລາຍຊື່ ແລະ ຕຳແໜ່ງຂອງ ຄະນະອຳນວຍການຂອງບໍລິສັດ ພ້ອມທັງສະແດງໃຫ້ເຫັນໂຄງຮ່າງການຈັດຕັ້ງພາຍໃນຂອງບໍລິສັດ;
   - ສັດສ່ວນການຖືຄອງຮຸ້ນຂອງບໍລິສັດ ຂອງ ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ;
   - ຄ່າຕອບແທນ ເປັນຕົ້ນ ເງິນເດືອນພື້ນຖານ, ເບ້ຍປະຊຸມ ແລະ ຄ່າຕອບແທນອື່ນໆ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ເປັນແຕ່ລະລາຍບຸກຄົນ ທີ່ໄດ້ຮັບພາຍໃນປີ ຈາກບໍລິສັດ.

5. ບົດລາຍງານການກວດສອບຂອງບໍລິສັດກວດສອບ ພ້ອມທັງເອກະສານຄັດຕິດ
   - ຢັ້ງຢືນຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ກັບຂໍ້ມູນທາງການເງິນ;
   - ບົດລາຍງານຂອງຜູ້ກວດສອບອິດສະຫຼະ;
   - ບົດລາຍງານຂອງບໍລິສັດກວດສອບບັນຊີອິດສະຫຼະ;
   - ບົດລາຍງານການເງິນລວມ;

– ເອກະສານຊ້ອນທ້າຍຂອງບົດລາຍງານການເງິນລວມ;
– ແຫຼ່ງທີ່ມາ ແລະ ຂໍ້ມູນລາຍຊື່;
– ນິຍາມສັບທາງການເງິນ;
– ຊອກຫາຂໍ້ມູນເພີ່ມເຕີມໄດ້ຈາກໃສ.

6. ຄ່າຕອບແທນທີ່ບໍລິສັດກວດສອບ ໄດ້ຮັບຈາກບໍລິສັດ ໂດຍສະແດງໃຫ້ເຫັນ ຄ່າຕອບແທນຈາກການກວດສອບບັນຊີ ແລະ ຄ່າບໍລິການອື່ນ ພາຍໃນປີ ພ້ອມທັງ ສະແດງໃຫ້ເຫັນປະເພດຂອງການໃຫ້ບໍລິການອື່ນດັ່ງກ່າວ.

## II. ບົດລາຍງານຄວາມຍືນຍົງ:

– ພາບລວມການລາຍງານແບບຍືນຍົງ;
– ການພັດທະນາແບບຍືນຍົງຂອງການຄຸ້ມຄອງບໍລິຫານໃນຕໍ່ໜ້າ;
– ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງບໍລິຫານ;
– ນະໂຍບາຍກ່ຽວກັບການຄວບຄຸມພາຍໃນຂອງບໍລິສັດ;
– ນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງຂອງບໍລິສັດ;
– ການດຳເນີນງານດ້ານເສດຖະກິດ;
– ການດຳເນີນງານດ້ານສິ່ງແວດລ້ອມ;
– ການປະກອບສ່ວນຊ່ວຍເຫຼືອສັງຄົມ ແລະ ອື່ນໆ ເປັນຕົ້ນ.

## ຕາຕະລາງປຽບທຽບຕົວເລກໃນເອກະສານລາຍງານການເງິນ ປະຈຳໄຕມາດ, 6 ເດືອນຕົ້ນປີ ແລະ ປະຈຳປີ

| ໄຕມາດ I (1-3) | ໄຕມາດ III (7-9) | 6 ເດືອນຕົ້ນປີ | ປະຈຳປີ |
|---|---|---|---|
| <u>ໃບລາຍງານຖານະການເງິນ</u><br>ສະແດງໃຫ້ເຫັນຕົວເລກໄຕມາດ I ຂອງປີປັດຈຸບັນ ທຽບກັບຕົວເລກ ປະຈຳປີຂອງປີຜ່ານມາ ເຊັ່ນ: 31/03/2018 ທຽບກັບ 31/12/2017<br><br><u>ໃບລາຍງານຜົນໄດ້ຮັບ</u><br>ສະແດງໃຫ້ເຫັນຕົວເລກ 3 ເດືອນ ສິ້ນສຸດໄຕມາດ I ຂອງປີປັດຈຸບັນ ທຽບກັບຕົວເລກ 3 ເດືອນສິ້ນສຸດ ໄຕມາດ I ຂອງປີຜ່ານມາ ເຊັ່ນ: 31/03/2018 ທຽບກັບ 31/03/2017<br><br><u>ໃບລາຍງານກະແສເງິນສົດລວມ</u><br>ສະແດງໃຫ້ເຫັນຕົວເລກ 3 ເດືອນ ສິ້ນສຸດໄຕມາດ I ຂອງປີປັດຈຸບັນ ທຽບກັບຕົວເລກ 3 ເດືອນສິ້ນສຸດ ໄຕມາດ I ຂອງປີຜ່ານມາ ເຊັ່ນ: 31/03/2018 ທຽບກັບ 31/03/2017<br><br><u>ໃບລາຍງານສ່ວນປ່ຽນແປງຂອງທຶນ</u><br>ສະແດງໃຫ້ເຫັນຕົວເລກ ສຳລັບໄລຍະ 3 ເດືອນ ສິ້ນສຸດໄຕມາດ I ຂອງປີປັດຈຸບັນ.<br><br>**(ຜ່ານການເຊັນຢັ້ງຢືນ ຈາກຝ່າຍບັນຊີ, ຝ່າຍກວດສອບພາຍໃນ ແລະ ຜູ້ອຳນວຍການຂອງບໍລິສັດ).** | <u>ໃບລາຍງານຖານະການເງິນ</u><br>ສະແດງໃຫ້ເຫັນຕົວເລກໄຕມາດ III ຂອງປີປັດຈຸບັນ ທຽບກັບຕົວເລກ ປະຈຳປີຂອງປີຜ່ານມາ ເຊັ່ນ: 30/09/2018 ທຽບກັບ 31/12/2017<br><br><u>ໃບລາຍງານຜົນໄດ້ຮັບ</u><br>ສະແດງໃຫ້ເຫັນຕົວເລກ 3 ເດືອນ ສິ້ນສຸດໄຕມາດ III ຂອງປີປັດຈຸບັນ ທຽບກັບຕົວເລກ 3 ເດືອນສິ້ນສຸດ ໄຕມາດ III ຂອງປີຜ່ານມາ ເຊັ່ນ: 1/7-30/09/2018 ທຽບກັບ 1/7-30/09/2017<br><br><u>ໃບລາຍງານກະແສເງິນສົດລວມ</u><br>ສະແດງໃຫ້ເຫັນຕົວເລກ 3 ເດືອນ ສິ້ນສຸດໄຕມາດ III ຂອງປີປັດຈຸບັນ ທຽບກັບຕົວເລກ 3 ເດືອນສິ້ນສຸດ ໄຕມາດ III ຂອງປີຜ່ານມາ ເຊັ່ນ: 1/7-30/09/2018 ທຽບກັບ 1/7-30/09/2017<br><br><u>ໃບລາຍງານສ່ວນປ່ຽນແປງຂອງທຶນ</u><br>ສະແດງໃຫ້ເຫັນຕົວເລກ ສຳລັບໄລຍະ 3 ເດືອນ ສິ້ນສຸດໄຕມາດ III ຂອງປີປັດຈຸບັນ.<br><br>**(ຜ່ານການເຊັນຢັ້ງຢືນ ຈາກຝ່າຍບັນຊີ, ຝ່າຍກວດສອບພາຍໃນ ແລະ ຜູ້ອຳນວຍການຂອງບໍລິສັດ).** | <u>ໃບລາຍງານຖານະການເງິນ</u><br>ສະແດງໃຫ້ເຫັນຕົວເລກ 6 ເດືອນຕົ້ນປີ ຂອງປີປັດຈຸບັນ ທຽບກັບຕົວເລກ ປະຈຳປີຂອງປີຜ່ານມາ ເຊັ່ນ: 30/06/2018 ທຽບກັບ 31/12/2017<br><br><u>ໃບລາຍງານຜົນໄດ້ຮັບ</u><br>ສະແດງໃຫ້ເຫັນຕົວເລກ 6 ເດືອນຕົ້ນປີ ຂອງປີປັດຈຸບັນ ທຽບກັບຕົວເລກ 6 ເດືອນຕົ້ນປີ ຂອງປີຜ່ານມາ ເຊັ່ນ: 30/06/2018 ທຽບກັບ 30/06/2017<br><br><u>ໃບລາຍງານກະແສເງິນສົດລວມ</u><br>ສະແດງໃຫ້ເຫັນຕົວເລກ 6 ເດືອນຕົ້ນປີ ຂອງປີປັດຈຸບັນ ທຽບກັບຕົວເລກ 6 ເດືອນຕົ້ນປີ ຂອງປີຜ່ານມາ ເຊັ່ນ: 30/06/2018 ທຽບກັບ 30/06/2017<br><br><u>ໃບລາຍງານສ່ວນປ່ຽນແປງຂອງທຶນ</u><br>ສະແດງໃຫ້ເຫັນຕົວເລກ ສຳລັບໄລຍະ 6 ເດືອນຕົ້ນປີ ຂອງປີປັດຈຸບັນ.<br><br>**(ຜ່ານການທົບທວນຈາກບໍລິສັດກວດສອບ ແລະ ຮັບຮອງຈາກສະພາບໍລິຫານຂອງບໍລິສັດ).** | <u>ໃບລາຍງານຖານະການເງິນ</u><br>ສະແດງໃຫ້ເຫັນຕົວເລກປະຈຳປີ ຂອງປີປັດຈຸບັນ ທຽບກັບຕົວເລກປະຈຳປີ ຂອງປີຜ່ານມາ<br><br><u>ໃບລາຍງານຜົນໄດ້ຮັບ</u><br>ສະແດງໃຫ້ເຫັນຕົວເລກປະຈຳປີ ຂອງປີປັດຈຸບັນ ທຽບກັບຕົວເລກປະຈຳປີ ຂອງປີຜ່ານມາ<br><br><u>ໃບລາຍງານກະແສເງິນສົດລວມ</u><br>ສະແດງໃຫ້ເຫັນຕົວເລກປະຈຳປີ ຂອງປີປັດຈຸບັນ ທຽບກັບຕົວເລກປະຈຳປີ ຂອງປີຜ່ານມາ<br><br><u>ໃບລາຍງານສ່ວນປ່ຽນແປງຂອງທຶນ</u><br>ສະແດງໃຫ້ເຫັນຕົວເລກ ສຳລັບໄລຍະ 1 ປີ ຂອງປີປັດຈຸບັນ.<br><br>**(ຜ່ານການກວດສອບຈາກບໍລິສັດກວດສອບ ແລະ ຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ).** |